**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ເລກທີ 2221/ກວຕ
ນະຄອນຫຼວງວຽງຈັນ, ວັນທີ 03 OCT 2019

# ຂໍ້ຕົກລົງ
# ວ່າດ້ວຍຖິ່ນກຳເນີດ

- ອີງຕາມ ກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມຊັບສິນທາງປັນຍາ ສະບັບເລກທີ 0105/ກຊປ, ລົງວັນທີ 18 ມັງກອນ 2019;

**ລັດຖະມົນຕີກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຖິ່ນກຳເນີດເປັນຕົ້ນ ການຈົດທະບຽນ, ການດຳເນີນການຫຼັງການຈົດທະບຽນ, ກາໝາຍຖິ່ນກຳເນີດແຫ່ງຊາດ, ສິດ ແລະ ໜ້າທີ່ຂອງເຈົ້າຂອງຖິ່ນກຳເນີດ ແລະ ໜ່ວຍງານກວດສອບ, ການເປັນຜູ້ຕາງໜ້າ, ການທົບທວນຄືນທາງດ້ານບໍລິຫານ ແລະ ອົງການຄຸ້ມຄອງວຽກງານຖິ່ນກຳເນີດ ເພື່ອຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ກ່ຽວກັບຖິ່ນກຳເນີດ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

### ມາດຕາ 2 ຖິ່ນກຳເນີດ

ຖິ່ນກຳເນີດ ແມ່ນສັນຍາລັກທີ່ບົ່ງບອກທີ່ມາຂອງສິນຄ້າຈາກດິນແດນ, ເຂດ ຫຼື ທ້ອງຖິ່ນຂອງປະເທດໃດໜຶ່ງຊຶ່ງເປັນສິ່ງສຳຄັນພາໃຫ້ສິນຄ້າມີຄຸນນະພາບ ແລະ ມີຊື່ສຽງ ຫຼື ຄຸນລັກສະນະອື່ນທີ່ຕິດພັນກັບພູມສາດ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຜູ້ດຳເນີນການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງທີ່ມີສ່ວນຮ່ວມໃນ

ຂະບວນການຜະລິດ, ເກັບຮັກສາ, ຂົນສົ່ງ, ສົ່ງອອກ, ຈັດຊື້ ແລະ ຈຳໜ່າຍສິນຄ້າຖິ່ນກຳເນີດ;

2. **ຜູ້ຮ້ອງຂໍ** ໝາຍເຖິງ ສະມາຄົມຖິ່ນກຳເນີດ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດັດແກ້ ຫຼື ຍົກເລີກການຈົດທະບຽນຖິ່ນກຳເນີດ. ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະຖືວ່າ ເປັນຜູ້ຮ້ອງຂໍໄດ້ ຖ້າຫາກສາມາດຢັ້ງຢືນຄວາມຖືກຕ້ອງຕາມເງື່ອນໄຂພິເສດ.
3. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດັດແກ້ ຫຼືຍົກເລີກ ການຈົດທະບຽນຖິ່ນກຳເນີດ;
4. **ເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ** ໝາຍເຖິງ ຂໍ້ມູນທີ່ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດສ້າງຂຶ້ນ ໂດຍລະບຸຂອບເຂດ, ທີ່ມາ, ວິທີ ແລະ ຂັ້ນຕອນການຜະລິດ, ຄຸນນະພາບ, ຊື່ສຽງ ຫຼື ລາຍລະອຽດຕ່າງໆຂອງຜະລິດຕະພັນ ທີ່ຕິດພັນກັບທີ່ມາ ແລະ ວິທີການກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ;
5. **ການຄັດຄ້ານ** ໝາຍເຖິງ ການຄັດຄ້ານຂອງບຸກຄົນທີສາມ ຕໍ່ການຮ້ອງຂໍຈົດທະບຽນຖິ່ນກຳເນີດທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນອຸດສາຫະກຳ;
6. **ການຍົກເລີກ** ໝາຍເຖິງ ການຍົກເລີກການຈົດທະບຽນຖິ່ນກຳເນີດໂດຍເຈົ້າຂອງຖິ່ນກຳເນີດເອງ ຫຼື ບຸກຄົນທີສາມ;
7. **ເຈົ້າຂອງຖິ່ນກຳເນີດ** ໝາຍເຖິງ ສະມາຄົມຖິ່ນກຳເນີດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີເງື່ອນໄຂພິເສດ ທີ່ໄດ້ຈົດທະບຽນຖິ່ນກຳເນີດ;
8. **ສິນຄ້າຖິ່ນກຳເນີດ** ໝາຍເຖິງ ຜະລິດຕະພັນກະສິກຳ, ອາຫານ, ເຄື່ອງດື່ມ ແລະ ຫັດຖະກຳທີ່ຖືກຜະລິດ ຫຼື ແປຮູບໃນຂອບເຂດ ທີ່ກຳນົດເປັນຖິ່ນກຳເນີດ ທີ່ໄດ້ວາງຈຳໜ່າຍໃນຕະຫຼາດ;
9. **ການກວດສອບ** ໝາຍເຖິງ ການກວດສອບໂດຍເຈົ້າຂອງຖິ່ນກຳເນີດເອງ ແລະ ໜ່ວຍງານກວດສອບອື່ນ ຫຼື ການຈັດຕັ້ງທີ່ໄດ້ຮັບມອບໝາຍ ເພື່ອຮັບປະກັນຄວາມສອດຄ່ອງກັບຄຸນລັກສະນະຂອງສິນຄ້າຖິ່ນກຳເນີດ;
10. **ການໂຈະ** ໝາຍເຖິງ ການດຳເນີນການໂດຍກົມຊັບສິນທາງປັນຍາ ຕໍ່ເຈົ້າຂອງຖິ່ນກຳເນີດ ເພື່ອໃຫ້ຢຸດການນຳໃຊ້ຖິ່ນກຳເນີດຊົ່ວຄາວ ໃນກໍລະນີທີ່ບໍ່ປະຕິບັດຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້;
11. **ປະເທດຕົ້ນກຳເນີດ** ໝາຍເຖິງ ປະເທດທີ່ເປັນສະຖານທີ່ຜະລິດສິນຄ້າຖິ່ນກຳເນີດ;
12. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ;
13. **ຜູ້ມອບສິດ** ໝາຍເຖິງ ຜູ້ທີ່ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນໃນການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດຳເນີນການອື່ນຢູ່ນຳກົມຊັບສິນທາງປັນຍາ;
14. **ຜູ້ຕາງໜ້າ** ໝາຍເຖິງ ທະນາຍຄວາມ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງຖິ່ນກຳເນີດໃນການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດຳເນີນການອື່ນຢູ່ນຳກົມຊັບສິນທາງປັນຍາ.

**ມາດຕາ 4 ບຸກຄົນທີ່ມີສິດໄດ້ຮັບການປົກປ້ອງຖິ່ນກຳເນີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ມີສິດໄດ້ຮັບການປົກປ້ອງ, ຍື່ນຄຳຮ້ອງຂໍຈົດທະບຽນ, ໄດ້ຮັບໃບຢັ້ງຢືນການຈົດທະບຽນ, ດຳເນີນການແກ້ໄຂທາງດ້ານບໍລິຫານ ແລະ ດຳເນີນການເຄື່ອນໄຫວອື່ນ ຕາມທີ່ໄດ້ກຳນົດໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

# ໝວດທີ 2
# ການຈົດທະບຽນຖິ່ນກຳເນີດ

**ມາດຕາ 5 ເງື່ອນໄຂ ທີ່ສາມາດໄດ້ຮັບໃບຢັ້ງຢືນຖິ່ນກຳເນີດ**

ສິນຄ້າ ທີ່ສາມາດໄດ້ຮັບໃບຢັ້ງຢືນຖິ່ນກຳເນີດ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1. ສິ່ງບົ່ງບອກໃຫ້ເຫັນທີ່ມາຂອງສິນຄ້າ ຈາກດິນແດນ, ເຂດ ຫຼື ທ້ອງຖິ່ນຂອງປະເທດໃດໜຶ່ງ;
2. ຖິ່ນກຳເນີດທາງພູມສາດ ເປັນສ່ວນສຳຄັນເຮັດໃຫ້ສິນຄ້າມີຄຸນນະພາບ ແລະ ຊື່ສຽງ ຫຼື ຄຸນລັກສະນະອື່ນ. ຄຸນນະພາບ ແລະ ຊື່ສຽງ ຫຼື ຄຸນລັກສະນະອື່ນນັ້ນ ແມ່ນອີງໃສ່ປັດໃຈທາງທຳມະຊາດ ທີ່ປະກອບດ້ວຍສະພາບຂອງດິນ, ອາກາດ, ນ້ຳ, ລະບົບນິເວດ, ເງື່ອນໄຂທຳມະຊາດ ແລະ ປັດໃຈມະນຸດ ລວມທັງຄວາມຊຳນິຊຳນານ ແລະ ປະສົບການຂອງຜູ້ຜະລິດ ແລະ ກຳມະວິທີການຜະລິດ ທີ່ມີມາແບບດັ້ງເດີມຂອງທ້ອງຖິ່ນນັ້ນ.

ສຳລັບຖິ່ນກຳເນີດທີ່ບໍ່ສາມາດຈົດທະບຽນ ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 6 ເງື່ອນໄຂຂອງຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດໃນ ສປປ ລາວ**

ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດໃນ ສປປ ລາວ ຕ້ອງມີສະຖານະເປັນສະມາຄົມຖິ່ນກຳເນີດ ແລະ ປະຕິບັດຕາມສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນມາດຕາ 27 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະຖືວ່າ ເປັນຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດໄດ້ ຖ້າຫາກສາມາດຢັ້ງຢືນຄວາມຖືກຕ້ອງຕາມເງື່ອນໄຂພິເສດໃດໜຶ່ງ ດັ່ງນີ້:

1. ເປັນພຽງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຽວເທົ່ານັ້ນ ທີ່ສົນໃຈຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ;
2. ມີຂອບເຂດການຜະລິດສິນຄ້າຖິ່ນກຳເນີດ ທີ່ປະກອບດ້ວຍຄຸນລັກສະນະແຕກຕ່າງຈາກພື້ນທີ່ໃກ້ຄຽງ ຫຼື ຄຸນລັກສະນະຂອງສິນຄ້າ ມີຄວາມແຕກຕ່າງຈາກສິນຄ້າທີ່ຜະລິດໃນພື້ນທີ່ໃກ້ຄຽງ.

ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຈາກຕ່າງປະເທດ ທີ່ຕ້ອງການຂໍຈົດທະບຽນຖິ່ນກຳເນີດໃນ ສປປ ລາວ ຕ້ອງມີຫຼັກຖານຢັ້ງຢືນການປົກປ້ອງຖິ່ນກຳເນີດ ຢູ່ໃນປະເທດຕົ້ນກຳເນີດ.

**ມາດຕາ 7 ຂັ້ນຕອນການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ**

ການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ມີຂັ້ນຕອນດັ່ງນີ້:

1. ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ຕ້ອງຍື່ນຄຳຮ້ອງຢູ່ນຳກົມຊັບສິນທາງປັນຍາ ແລະ ຕ້ອງປະຕິບັດໃຫ້ໄດ້ຕາມເງື່ອນໄຂຕ່ຳສຸດ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 35 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;
2. ກົມຊັບສິນທາງປັນຍາຕ້ອງຮັບຄຳຮ້ອງ, ອອກໃບຮັບຄຳຮ້ອງຊຶ່ງລະບຸເລກທີ ແລະ ວັນທີຍື່ນຄຳຮ້ອງ ໃນກໍລະນີ ທີ່ຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂຕ່ຳສຸດ;
3. ໃນກໍລະນີ ທີ່ຄຳຮ້ອງຫາກບໍ່ສອດຄ່ອງຕາມເງື່ອນໄຂຕ່ຳສຸດ ກົມຊັບສິນທາງປັນຍາ ຈະບໍ່ຮັບຄຳຮ້ອງດັ່ງກ່າວ;
4. ໃນກໍລະນີຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ມີຈຸດປະສົງຂໍຖອນຄຳຮ້ອງ ຫຼື ຄຳຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດຈະບໍ່ໄດ້ສົ່ງຄືນຄ່າທຳນຽມ ແລະ ຄ່າບໍລິການທີ່ຈ່າຍໄປແລ້ວ.

**ມາດຕາ 8 ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ**

ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ສາມາດຍື່ນເປັນພາສາລາວ ຫຼື ພາສາອັງກິດກໍໄດ້ ຊຶ່ງປະກອບມີເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດຕາມແບບພິມຂອງກົມຊັບສິນທາງປັນຍາ;
2. ໃບມອບສິດ ທີ່ເປັນຕົ້ນສະບັບ ໃນກໍລະນີ ທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;
3. ຮູບຂອງຖິ່ນກຳເນີດທີ່ຈະແຈ້ງ;
4. ບົດລາຍງານ ກ່ຽວກັບຂົງເຂດພູມສາດ ທີ່ຈະນຳໃຊ້ເປັນຖິ່ນກຳເນີດ;
5. ສິນຄ້າທີ່ກ່ຽວຂ້ອງກັບຖິ່ນກຳເນີດ ແລະ ວິທີການກວດກາທີ່ຈະນຳໃຊ້;
6. ບົດລາຍງານ ກ່ຽວກັບຈຸດເດັ່ນຂອງຖິ່ນກຳເນີດ ຊຶ່ງຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດສະເໜີໃຫ້ເປັນຖິ່ນກຳເນີດ ແລະ ຫຼັກຖານເພື່ອສະໜັບສະໜູນບົດລາຍງານນັ້ນ;
7. ຫຼັກຖານຢັ້ງຢືນການປົກປ້ອງຖິ່ນກຳເນີດ ຢູ່ໃນປະເທດຕົ້ນກຳເນີດ ໃນກໍລະນີທີ່ຄຳຮ້ອງຂໍຈົດທະບຽນນັ້ນ ໄດ້ອີງໃສ່ການປົກປ້ອງຢູ່ຕ່າງປະເທດ;
8. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ໃນກໍລະນີຄຳຮ້ອງ ແລະ ເອກະສານທີ່ຍື່ນເປັນພາສາອັງກິດຕ້ອງແປເປັນພາສາລາວ ໂດຍສອດຄ່ອງຕາມ ມາດຕາ 37 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ. ຖ້າບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວຄຳຮ້ອງຈະບໍ່ຖືກນຳມາພິຈາລະນາ ແລະ ຖືວ່າຄຳຮ້ອງນັ້ນຖືກສະຫຼະສິດ.

ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ບໍ່ຈຳເປັນຕ້ອງແປເນື້ອໃນບາງສ່ວນຂອງຄຳຮ້ອງເຊັ່ນ: ຊື່ ແລະ ທີ່ຢູ່ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ຄຳສັບທາງດ້ານວິຊາການ.

ໃນກໍລະນີຊື່ຖິ່ນກຳເນີດໃດໜຶ່ງ ຫາກບໍ່ເປັນພາສາອັງກິດຕ້ອງໄດ້ແປເປັນພາສາລາວ ຫຼື ຕີຄວາມໝາຍ ແລະ ການອ່ານອອກສຽງຂອງຊື່ຖິ່ນກຳເນີດນັ້ນ.

**ມາດຕາ 9 ເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ**

ເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ແມ່ນເນື້ອໃນທີ່ໄດ້ກຳນົດໄວ້ໃນຂໍ້ 3, 4, 5 ແລະ 6 ໃນມາດຕາ 8 ຂອງຂໍ້ຕົກລົງ ສະບັບນີ້ ແລະ ຕ້ອງມີຂໍ້ມູນດັ່ງນີ້:

1. ຊື່ຖິ່ນກຳເນີດທີ່ຂໍປົກປ້ອງຊຶ່ງເປັນຊື່ທີ່ນຳໃຊ້ໃນທາງການຄ້າ ຫຼື ເປັນທີ່ຮູ້ຈັກມາກ່ອນແລ້ວ;
2. ຄຳອະທິບາຍ ກ່ຽວກັບສິນຄ້າທີ່ຮ້ອງຂໍຈົດທະບຽນຖິ່ນກຳເນີດຊຶ່ງລວມມີວັດຖຸດິບ, ຮູບຮ່າງລວມທັງ ຄຸນລັກສະນະທາງເຄມີ, ສ່ວນປະກອບຂອງຈຸລິນຊີ ຫຼື ລົດຊາດສະເພາະຂອງສິນຄ້າຖິ່ນກຳເນີດ (ຖ້າມີ);
3. ຄຳອະທິບາຍ ກ່ຽວກັບພື້ນທີ່ທາງພູມສາດທີ່ໄດ້ກຳນົດ ຊຶ່ງມີຄວາມກ່ຽວພັນຕາມທີ່ໄດ້ລະບຸໄວ້ໃນຂໍ້ 6 ຂອງມາດຕານີ້;
4. ຫຼັກຖານທີ່ບົ່ງບອກວ່າສິນຄ້າມີຕົ້ນກຳເນີດມາຈາກພື້ນທີ່ທີ່ໄດ້ກຳນົດ;
5. ຄຳອະທິບາຍກ່ຽວກັບວິທີ ແລະ ຂັ້ນຕອນການຜະລິດສິນຄ້າຖິ່ນກຳເນີດ;
6. ລາຍລະອຽດ ກ່ຽວກັບຄວາມກ່ຽວພັນລະຫວ່າງຄຸນນະພາບ, ຊື່ສຽງ ຫຼື ລາຍລະອຽດຕ່າງໆຂອງສິນຄ້າກັບແຫຼ່ງທີ່ມາທາງພູມສາດ;
7. ຊື່ ແລະ ທີ່ຢູ່ຂອງໜ່ວຍງານກວດສອບ;
8. ສິນຄ້າທີ່ກ່ຽວຂ້ອງກັບຖິ່ນກຳເນີດ ແລະ ວິທີການກວດສອບ;
9. ລະບຽບການ ກ່ຽວກັບການຕິດກາໝາຍຖິ່ນກຳເນີດແຫ່ງຊາດໃສ່ສິນຄ້າ;

**ມາດຕາ 10 ເງື່ອນໄຂຕ່ຳສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ**

ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ທີ່ມີເງື່ອນໄຂຕ່ຳສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ ຕ້ອງປະກອບດ້ວຍ ຊື່, ທີ່ຢູ່, ສັນຊາດຂອງຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ, ຮູບຂອງຖິ່ນກຳເນີດທີ່ຈະແຈ້ງ, ສິນຄ້າທີ່ກ່ຽວ

ຂ້ອງກັບຖິ່ນກຳເນີດ ແລະ ວິທີການກວດສອບທີ່ຈະນຳໃຊ້. ນອກຈາກນັ້ນ ຍັງຕ້ອງມີໃບມອບສິດທີ່ລະບຸຊື່ ແລະ ທີ່ຢູ່ຂອງຜູ້ຕາງໜ້າ ໃນກໍລະນີທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າພ້ອມດ້ວຍໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

### ມາດຕາ 11 ການກວດສອບເບື້ອງຕົ້ນ

ພາຍຫຼັງຮັບຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດແລ້ວ ກົມຊັບສິນທາງປັນຍາຕ້ອງດຳເນີນການກວດສອບເບື້ອງຕົ້ນກ່ຽວກັບຄວາມຄົບຖ້ວນ ຂອງສຳນວນຄຳຮ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ຕ້ອງດຳເນີນການກວດສອບເບື້ອງຕົ້ນ ໃຫ້ສຳເລັດພາຍໃນເວລາ 30 ວັນ ນັບແຕ່ວັນຮັບສຳນວນຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີ ສຳນວນຄຳຮ້ອງ ຫາກບໍ່ຄົບຖ້ວນ ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຊາບເພື່ອສະໜອງໃຫ້ຄົບຖ້ວນ ຫຼື ດັດແກ້ ໃຫ້ທັນຕາມກຳນົດເວລາ 60 ວັນ ນັບແຕ່ວັນທີ່ອອກແຈ້ງການຂອງກົມເປັນຕົ້ນໄປ. ຖ້າຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດບໍ່ສາມາດປະຕິບັດຕາມແຈ້ງການ ກົມຊັບສິນທາງປັນຍາ ຕ້ອງບໍ່ພິຈາລະນາສຳນວນຄຳຮ້ອງດັ່ງກ່າວ ແລະ ແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຊາບ.

ກົມຊັບສິນທາງປັນຍາ ຕ້ອງຕໍ່ເວລາໃຫ້ຕື່ມອີກ 30 ວັນ ນັບແຕ່ວັນສິ້ນສຸດແຈ້ງການຄັ້ງທຳອິດເປັນຕົ້ນໄປ ຖ້າຫາກຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ມີເຫດຜົນພຽງພໍ.

ໃນກໍລະນີ ສຳນວນຄຳຮ້ອງດັ່ງກ່າວ ຄົບຖ້ວນຕາມການກວດສອບເບື້ອງຕົ້ນ ກົມຊັບສິນທາງປັນຍາຕ້ອງເຜີຍແຜ່ຂໍ້ມູນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

### ມາດຕາ 12 ການເຜີຍແຜ່ຄຳຮ້ອງ ແລະ ການສະເໜີຂໍຄັດຄ້ານ

ພາຍຫຼັງກົມຊັບສິນທາງປັນຍາ ໄດ້ສຳເລັດການກວດສອບເບື້ອງຕົ້ນ ຕ້ອງເຜີຍແຜ່ຂໍ້ມູນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ພາຍໃນໄລຍະເວລາ 15 ວັນ ປະກອບມີດັ່ງນີ້:

1. ຊື່ຖິ່ນກຳເນີດ ທີ່ຂໍປົກປ້ອງ;
2. ເລກທີ ແລະ ວັນທີຍື່ນຄຳຮ້ອງ;
3. ຊື່ ແລະ ທີ່ຢູ່ ຂອງຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ;
4. ສິນຄ້າທີ່ ຈະນຳໃຊ້ຖິ່ນກຳເນີດ;
5. ລາຍລະອຽດ ກ່ຽວກັບຄຸນນະພາບ, ຊື່ສຽງ ຫຼື ຄຸນລັກສະນະສະເພາະຂອງສິນຄ້າ ຖິ່ນກຳເນີດ;
6. ລາຍລະອຽດ ກ່ຽວກັບຄວາມກ່ຽວພັນລະຫວ່າງ ຄຸນນະພາບ, ຊື່ສຽງ ຫຼື ຄຸນລັກສະນະສະເພາະຂອງສິນຄ້າ ກັບແຫຼ່ງກຳເນີດທາງພູມສາດ;
7. ລາຍລະອຽດກ່ຽວກັບທີ່ຕັ້ງທາງພູມສາດ ແລະ ແຜນທີ່ຂອງຖິ່ນກຳເນີດ ທີ່ຂໍຈົດທະບຽນ.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດໄດ້ພາຍໃນເວລາ 60 ວັນ ນັບແຕ່ວັນທີທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນອຸດສາຫະກຳ, ໂດຍຍື່ນຄຳສະເໜີຂໍຄັດຄ້ານ ຕາມແບບພິມຂອງກົມຊັບສິນທາງປັນຍາພ້ອມທັງຈ່າຍຄ່າບໍລິການ, ຊຶ່ງສຳນວນຄຳສະ ເໜີຂໍຄັດຄ້ານການຈົດທະບຽນຖິ່ນກຳເນີດ ຕ້ອງປະກອບມີເອກະສານດັ່ງນີ້:

1. ໃບສະເໜີຂໍຄັດຄ້ານການຈົດທະບຽນຖິ່ນກຳເນີດ;
2. ເອກະສານ ແລະ ຫຼັກຖານຊີ້ແຈງ ກ່ຽວກັບການຄັດຄ້ານ;
3. ໃບຮັບເງິນຄ່າບໍລິການ.

**ມາດຕາ 13 ການພິຈາລະນາຄຳສະເໜີຂໍຄັດຄ້ານ**

ການພິຈາລະນາຄຳສະເໜີຂໍຄັດຄ້ານການຈົດທະບຽນຖິ່ນກຳເນີດ ມີຂັ້ນຕອນດັ່ງນີ້:

1. ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ເຈົ້າຂອງຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ທີ່ຖືກຄັດຄ້ານນັ້ນຊາບຢ່າງທັນການ ພາຍຫຼັງໄດ້ຮັບຄຳສະເໜີຂໍຄັດຄ້ານ;
2. ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ຕ້ອງຍື່ນຄຳຊີ້ແຈງພ້ອມດ້ວຍຂໍ້ມູນຫຼັກຖານ ກ່ຽວກັບຖິ່ນກຳເນີດຂອງຕົນເຖິງກົມຊັບສິນທາງປັນຍາ ພາຍໃນກຳນົດເວລາ 60 ວັນ ນັບແຕ່ວັນທີ່ໄດ້ຮັບແຈ້ງການ ກ່ຽວກັບການຄັດຄ້ານດັ່ງກ່າວ;
3. ກົມຊັບສິນທາງປັນຍາ ຕ້ອງສົ່ງສຳເນົາຄຳຊີ້ແຈງນັ້ນໃຫ້ຜູ້ຂໍຄັດຄ້ານຊາບ;
4. ກົມຊັບສິນທາງປັນຍາ ຕ້ອງພິຈາລະນາຄຳຊີ້ແຈງ ແລະ ຂໍ້ມູນຫຼັກຖານດັ່ງກ່າວ;
5. ກົມຊັບສິນທາງປັນຍາ ຕ້ອງອອກໜັງສືເຊີນໃຫ້ຄູ່ກໍລະນີມາຊີ້ແຈງ ຫຼື ສະແດງຫຼັກຖານ ຫຼື ສະໜອງຂໍ້ມູນເພີ່ມເຕີມ ໃນກໍລະນີຂໍ້ມູນຫຼັກຖານຂອງຜູ້ຂໍຄັດຄ້ານ ແລະ ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຫາກບໍ່ຄົບຖ້ວນ ຫຼື ບໍ່ຊັດເຈນ;
6. ກົມຊັບສິນທາງປັນຍາ ຕ້ອງພິຈາລະນາການຄັດຄ້ານຕາມຫຼັກຖານທີ່ມີ ຖ້າຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ຜູ້ຂໍຄັດຄ້ານ ບໍ່ມາຊີ້ແຈງ ແລະ ສະແດງຫຼັກຖານ ຫຼື ສະໜອງຂໍ້ມູນເພີ່ມເຕີມ ພາຍໃນເວລາ 60 ວັນ ນັບແຕ່ວັນອອກໜັງສືເຊີນ ຂອງກົມ;
7. ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການພິຈາລະນາພ້ອມດ້ວຍເຫດຜົນ ໃຫ້ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ແລະ ຜູ້ສະເໜີຂໍຄັດຄ້ານຊາບ;
8. ກົມຊັບສິນທາງປັນຍາ ຕ້ອງປະຕິເສດຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ໃນກໍລະນີກົມຊັບສິນທາງປັນຍາພິຈາລະນາແລ້ວເຫັນວ່າ ການຄັດຄ້ານມີເຫດຜົນ ແລະ ມີຫຼັກຖານພຽງພໍ;
9. ກົມຊັບສິນທາງປັນຍາ ຕ້ອງສືບຕໍ່ພິຈາລະນາຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ໃນກໍລະນີກົມຊັບສິນທາງປັນຍາພິຈາລະນາແລ້ວເຫັນວ່າ ການຄັດຄ້ານບໍ່ມີເຫດຜົນ ແລະ ບໍ່ມີຫຼັກຖານພຽງພໍ;
10. ຄູ່ກໍລະນີທີ່ບໍ່ພໍໃຈຕໍ່ການພິຈາລະນາດັ່ງກ່າວ ສາມາດສະເໜີເຖິງ ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຂອງກົມຊັບສິນທາງປັນຍາ ພາຍໃນກຳນົດເວລາ 60 ວັນ ນັບແຕ່ມື້ອອກແຈ້ງການຂອງກົມເປັນຕົ້ນໄປ.

**ມາດຕາ 14 ການກວດສອບເນື້ອໃນ**

ກົມຊັບສິນທາງປັນຍາ ຕ້ອງດຳເນີນການກວດສອບເນື້ອໃນໂດຍອີງຕາມຖານຂໍ້ມູນ ຂອງກົມຊັບສິນທາງປັນຍາ ແລະ ສາກົນ ແລະ ພິຈາລະນາຄຳຮ້ອງ ຕາມເງື່ອນໄຂທີ່ກຳນົດໄວ້ໃນມາດຕາ 18 ແລະ 25 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງປະຕິເສດຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ໃນກໍລະນີສຳນວນຄຳຮ້ອງດັ່ງກ່າວ ຫາກບໍ່ສອດຄ່ອງຕາມເງື່ອນໄຂຂອງການຈົດທະບຽນ ແລະ ຕ້ອງແຈ້ງເຫດຜົນໃນການປະຕິເສດເບື້ອງຕົ້ນໃຫ້ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຊາບ.

ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ຕ້ອງສະໜອງຂໍ້ມູນ ແລະ ເອກະສານ ຫຼື ຄຳຊີ້ແຈງພາຍຫຼັງທີ່ໄດ້ຮັບແຈ້ງການປະຕິເສດເບື້ອງຕົ້ນ ໃຫ້ກົມຊັບສິນທາງປັນຍາ ພາຍໃນໄລຍະເວລາ 60 ວັນ ນັບແຕ່ວັນທີ່ໄດ້ອອກແຈ້ງການຂອງກົມເປັນຕົ້ນໄປ. ຖ້າຫາກຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ບໍ່ປະຕິບັດຕາມກຳນົດເວລາຕາມແຈ້ງການຄຳຮ້ອງດັ່ງກ່າວ ຈະບໍ່ຖືກນຳມາພິຈາລະນາ ແລະ ຖືວ່າ ຄຳຮ້ອງນັ້ນຖືກສະຫຼະສິດ. ພາຍຫຼັງທີ່ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດສະໜອງຂໍ້ມູນ ແລະ ເອກະສານ ຫຼື ຄຳຊີ້ແຈງ ໃຫ້ກົມຊັບສິນທາງປັນຍາແລ້ວ ແຕ່ເຫັນວ່າຍັງບໍ່ພຽງພໍກົມຊັບສິນທາງປັນຍາ ສາມາດຮຽກເອົາຂໍ້ມູນເພີ່ມເຕີມຈາກຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ.

ກົມຊັບສິນທາງປັນຍາ ສາມາດຕໍ່ເວລາໃຫ້ຕື່ມອີກ 30 ວັນ ນັບແຕ່ວັນສິ້ນສຸດແຈ້ງການຄັ້ງທຳອິດ ເປັນຕົ້ນໄປ ຖ້າມີເຫດຜົນພຽງພໍ.

ກົມຊັບສິນທາງປັນຍາ ຕ້ອງປະຕິເສດຂັ້ນສຸດທ້າຍຕໍ່ຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດ ເມື່ອເຫັນວ່າຄໍາຮ້ອງຂໍດັ່ງກ່າວ ບໍ່ສອດຄ່ອງກັບເງື່ອນໄຂຂອງການຈົດທະບຽນ.

ສໍາລັບຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດຈາກຕ່າງປະເທດ ກົມຊັບສິນທາງປັນຍາ ຕ້ອງກວດສອບຄວາມຖືກຕ້ອງຂອງຫຼັກຖານຢັ້ງຢືນການປົກປ້ອງຖິ່ນກໍາເນີດ ຢູ່ໃນປະເທດຕົ້ນກໍາເນີດ ແລະ ບໍ່ຂັດກັບເງື່ອນໄຂທີ່ກໍານົດໄວ້ໃນມາດຕາ 25 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

### ມາດຕາ 15 ການດັດແກ້ຄໍາຮ້ອງ

ຜູ້ຮ້ອງຂໍຈົດທະບຽນຖິ່ນກໍາເນີດ ສາມາດດັດແກ້ຄໍາຮ້ອງໄດ້ທຸກເວລາ ໃນໄລຍະເວລາຂອງການກວດສອບ, ແຕ່ຕ້ອງດໍາເນີນກ່ອນການຈົດທະບຽນ, ການສະຫຼະສິດ, ການປະຕິເສດຂັ້ນສຸດທ້າຍ ຫຼື ການສິ້ນສຸດການພິຈາລະນາອື່ນໆ ຂອງຄໍາຮ້ອງດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຕ້ອງຈ່າຍຄ່າທໍານຽມ ແລະ ຄ່າບໍລິການ, ແຕ່ການດັດແກ້ຄໍາຮ້ອງນັ້ນ ຕ້ອງບໍ່ແມ່ນການດັດແກ້ດັ່ງຕໍ່ໄປນີ້:

1. ການລະບຸເອົາສິນຄ້າໃໝ່ເຂົ້າໃນຄໍາຮ້ອງ;
2. ປັບປຸງຄຸນລັກສະນະສໍາຄັນ ຫຼື ລັກສະນະຂອງສິນຄ້າ;
3. ປ່ຽນແປງຄວາມກ່ຽວພັນຕາມທີ່ໄດ້ລະບຸໄວ້ໃນຂໍ້ 6 ຂອງມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;
4. ປ່ຽນແປງຊື່ ຫຼື ສ່ວນໃດໜຶ່ງຂອງຊື່ສິນຄ້າ;
5. ການດັດແກ້ທີ່ຈະສົ່ງຜົນກະທົບຕໍ່ຂອບເຂດພື້ນທີ່ທີ່ຖືກກໍານົດເປັນຖິ່ນກໍາເນີດ.

### ມາດຕາ 16 ການຈົດທະບຽນຖິ່ນກໍາເນີດ

ກົມຊັບສິນທາງປັນຍາ ຕ້ອງຈົດທະບຽນຖິ່ນກໍາເນີດ, ບັນທຶກຂໍ້ມູນທີ່ກ່ຽວຂ້ອງ ລົງໃນປຶ້ມບັນທຶກການຈົດທະບຽນ ແລະ ຖານຂໍ້ມູນຂອງກົມຊັບສິນທາງປັນຍາ ໃນເມື່ອສໍານວນຄໍາຮ້ອງສອດຄ່ອງຕາມເງື່ອນໄຂການຈົດທະບຽນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້ ຫຼື ຄໍາຮ້ອງຂໍຈົດທະບຽນໄດ້ຜ່ານຂະບວນການຄັດຄ້ານ ແຕ່ການຄັດຄ້ານນັ້ນ ບໍ່ເປັນຜົນ.

### ມາດຕາ 17 ການເຜີຍແຜ່ຜົນຂອງການຈົດທະບຽນ

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຜົນຂອງການຈົດທະບຽນຖິ່ນກໍາເນີດ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກໍາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 44 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນທີ່ຖືກດັດແກ້ຄືນໃໝ່ ໃນກໍລະນີຜູ້ຮ້ອງຂໍຈົດທະບຽນຖິ່ນກໍາເນີດ ສະເໜີຫາກົມຊັບສິນທາງປັນຍາວ່າ ການເຜີຍແຜ່ຜົນຂອງການຈົດທະບຽນຖິ່ນກໍາເນີດຄັ້ງທໍາອິດນັ້ນ ມີຂໍ້ມູນຜິດພາດ ທີ່ເກີດຈາກຜູ້ຮ້ອງຂໍຈົດທະບຽນຖິ່ນກໍາເນີດ ຫຼື ກົມຊັບສິນທາງປັນຍາ. ການສະເໜີດັ່ງກ່າວ ຕ້ອງດໍາເນີນການພາຍໃນ 60 ວັນ ນັບແຕ່ວັນເຜີຍແຜ່ຄັ້ງທໍາອິດເປັນຕົ້ນໄປ ແລະ ບໍ່ໄດ້ຈ່າຍຄ່າບໍລິການ.

## ໝວດທີ 3
## ການດໍາເນີນການຫຼັງການຈົດທະບຽນຖິ່ນກໍາເນີດ

### ມາດຕາ 18 ການປ່ຽນແປງຂໍ້ມູນ ຫຼັງການຈົດທະບຽນຖິ່ນກໍາເນີດ

ເຈົ້າຂອງຖິ່ນກໍາເນີດ ສາມາດຍື່ນຄໍາຮ້ອງຢູ່ນໍາກົມຊັບສິນທາງປັນຍາ ເພື່ອປ່ຽນແປງຂໍ້ມູນກ່ຽວກັບ ຊື່, ທີ່ຢູ່ ຫຼື ຊື່ ແລະ ທີ່ຢູ່ຂອງເຈົ້າຂອງຖິ່ນກໍາເນີດ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນ, ບັນທຶກການຈົດທະບຽນຖິ່ນກຳເນີດ ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

**ມາດຕາ 19 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດ**

ເຈົ້າຂອງຖິ່ນກຳເນີດ ສາມາດຂໍສຳເນົາໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດ ເພື່ອນຳໃຊ້ເປັນຫຼັກຖານໃນການດຳເນີນຄະດີຢູ່ສານປະຊາຊົນ, ການຈົດທະບຽນຖິ່ນກຳເນີດຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນການຈົດທະບຽນທີ່ເສຍຫາຍ ຫຼື ເສຍ ຊຶ່ງເຈົ້າຂອງຖິ່ນກຳເນີດທີ່ໄດ້ຮັບການຈົດທະບຽນ ຢູ່ກົມຊັບສິນທາງປັນຍາ ຕ້ອງຍື່ນຄຳຮ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 20 ການດັດແກ້ພາຍຫຼັງການຈົດທະບຽນຖິ່ນກຳເນີດ**

ພາຍຫຼັງຖິ່ນກຳເນີດ ໄດ້ຮັບການຈົດທະບຽນແລ້ວ ເຈົ້າຂອງຖິ່ນກຳເນີດ ສາມາດຍື່ນຄຳຮ້ອງຂໍດັດແກ້ຂໍ້ມູນບາງສ່ວນຢູ່ໃນເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ຫຼື ດັດແກ້ບາງຂໍ້ຜິດພາດໃນສຳນວນຄຳຮ້ອງຂໍຈົດທະບຽນ ໂດຍຍື່ນຄຳຮ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ, ຊຶ່ງການດັດແກ້ດັ່ງກ່າວ ກົມຊັບສິນທາງປັນຍາ ອະນຸຍາດໃຫ້ດັດແກ້ໄດ້ພຽງສ່ວນໜ້ອຍ. ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນກ່ຽວກັບການດັດແກ້ດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

ໃນກໍລະນີ ທີ່ການສະເໜີຂໍດັດແກ້ກ່ຽວຂ້ອງກັບການປ່ຽນແປງໜຶ່ງ ຫຼື ຫຼາຍລາຍການ ໃນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ໃຫ້ຖືວ່າບໍ່ແມ່ນການດັດແກ້ພຽງສ່ວນໜ້ອຍ. ຖ້າຫາກກົມຊັບສິນທາງປັນຍາ ເຫັນດີຕໍ່ການສະເໜີຂໍດັດແກ້ດັ່ງກ່າວ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດນັ້ນ ຍື່ນຄຳຮ້ອງມາໃໝ່ ແລະ ໃຫ້ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນໝວດ 2 ຂອງຂໍ້ຕົກລົງສະບັບນີ້.

ການດັດແກ້ທີ່ບໍ່ຖືວ່າແມ່ນການດັດແກ້ສ່ວນໜ້ອຍ ແມ່ນການດັດແກ້ລາຍການດັ່ງລຸ່ມນີ້:

1. ກ່ຽວຂ້ອງກັບຄຸນລັກສະນະທີ່ສຳຄັນຂອງສິນຄ້າຖິ່ນກຳເນີດ;
2. ຄວາມກ່ຽວພັນລະຫວ່າງຄຸນນະພາບ, ຊື່ສຽງ ຫຼື ລາຍລະອຽດຕ່າງໆຂອງ ສິນຄ້າຖິ່ນກຳເນີດ;
3. ກ່ຽວກັບຊື່ ຫຼື ສ່ວນໃດໜຶ່ງຂອງຊື່ຜະລິດຕະພັນ;
4. ເຮັດໃຫ້ມີການປ່ຽນແປງຂອບເຂດຖິ່ນກຳເນີດທີ່ໄດ້ຖືກກຳນົດໄວ້.

**ມາດຕາ 21 ການຍົກເລີກການຈົດທະບຽນຖິ່ນກຳເນີດ**

ບຸກຄົນທີສາມ ມີສິດຍື່ນຄຳສະເໜີຂໍຍົກເລີກການຈົດທະບຽນຖິ່ນກຳເນີດ ພາຍໃນໄລຍະເວລາ 5 ປີ ນັບແຕ່ວັນເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ເປັນຕົ້ນໄປ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ການຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນຖິ່ນກຳເນີດ ໃຫ້ປະຕິບັດຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ມີສິດຍົກເລີກການຈົດທະບຽນຖິ່ນກຳເນີດ ທີ່ໄດ້ຮັບການປົກປ້ອງຕາມການພິຈາລະນາຂອງກົມ ຫຼື ຕາມການສະເໜີຂອງບຸກຄົນທີສາມໃນກໍລະນີໃດໜຶ່ງ ດັ່ງລຸ່ມນີ້:

1. ບໍ່ສາມາດປະຕິບັດຕາມເງື່ອນໄຂຂອງເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ;
2. ບໍ່ມີສິນຄ້າຖິ່ນກຳເນີດຈຳໜ່າຍໃນທ້ອງຕະຫຼາດເປັນເວລາຕໍ່າສຸດ 7 ປີ ນັບແຕ່ວັນເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳເປັນຕົ້ນໄປ;
3. ມີຫຼັກຖານພຽງພໍທີ່ເຮັດໃຫ້ເຊື່ອວ່າ ເຈົ້າຂອງຖິ່ນກຳເນີດ ທີ່ໄດ້ຮັບການຈົດທະບຽນ ບໍ່ແມ່ນເຈົ້າຂອງທີ່ແທ້ຈິງ;
4. ສຳລັບຖິ່ນກຳເນີດຕ່າງປະເທດ ທີ່ບໍ່ໄດ້ຮັບການປົກປ້ອງ ຫຼື ສິ້ນສຸດການປົກປ້ອງ ໃນປະເທດຕົ້ນກຳເນີດ ຫຼື ຢຸດນຳໃຊ້ໃນປະເທດນັ້ນ;

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ເຈົ້າຂອງຖິ່ນກຳເນີດຊາບ ໃນເມື່ອໄດ້ຮັບຄຳສະເໜີຂໍຍົກເລີກຈາກບຸກຄົນທີສາມ.

ເຈົ້າຂອງຖິ່ນກຳເນີດສາມາດຍື່ນຄຳຊີ້ແຈງ ເຖິງກົມຊັບສິນທາງປັນຍາ ພາຍໃນເວລາ 60 ວັນ ນັບແຕ່ວັນທີອອກແຈ້ງການຂອງກົມເປັນຕົ້ນໄປ.

ກົມຊັບສິນທາງປັນຍາ ຕ້ອງອອກໜັງສືຍົກເລີກຖິ່ນກຳເນີດ ແລະ ແຈ້ງໃຫ້ເຈົ້າຂອງຖິ່ນກຳເນີດຊາບ ໃນກໍລະນີ ເຈົ້າຂອງຖິ່ນກຳເນີດ ຫາກບໍ່ມີຄຳຊີ້ແຈງໃດໆ ໃຫ້ຖືວ່າ ເຈົ້າຂອງຖິ່ນກຳເນີດນັ້ນ ຍິນຍອມຕໍ່ການຍົກເລີກການຈົດທະບຽນຖິ່ນກຳເນີດຂອງຕົນ.

ກົມຊັບສິນທາງປັນຍາ ຕ້ອງຍົກເລີກການຈົດທະບຽນຖິ່ນກຳເນີດ ໃນກໍລະນີທີ່ ບຸກຄົນທີສາມຫາກມີການຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ມີການຍົກເລີກການຈົດທະບຽນຖິ່ນກຳເນີດດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 139 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການຍົກເລີກໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດ ໃຫ້ເຈົ້າຂອງຖິ່ນກຳເນີດ ແລະ ບຸກຄົນທີ່ຮ້ອງຂໍຍົກເລີກເພື່ອຊາບ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກລົງໃນຖານຂໍ້ມູນ ແລະ ເຜີຍແຜ່ການຍົກເລີກດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

## ໝວດທີ 4
## ກາໝາຍຖິ່ນກຳເນີດແຫ່ງຊາດ

**ມາດຕາ 22 ກາໝາຍຖິ່ນກຳເນີດແຫ່ງຊາດ**

ກາໝາຍຖິ່ນກຳເນີດແຫ່ງຊາດ ແມ່ນກາໝາຍທີ່ສ້າງຂຶ້ນ ແລະ ຄຸ້ມຄອງໂດຍກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຢັ້ງຢືນສິນຄ້າຖິ່ນກຳເນີດທີ່ໄດ້ຮັບການຈົດທະບຽນແລ້ວ. ກົມຊັບສິນທາງປັນຍາ ຕ້ອງອອກໃບຢັ້ງຢືນນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ໃຫ້ແກ່ເຈົ້າຂອງຖິ່ນກຳເນີດ.

**ມາດຕາ 23 ສິດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ**

ເຈົ້າຂອງຖິ່ນກຳເນີດ ມີສິດຄຸ້ມຄອງ, ນຳໃຊ້, ຜະລິດ ຫຼື ອະນຸຍາດໃຫ້ສະມາຊິກ ຂອງເຈົ້າຂອງຖິ່ນກຳເນີດ ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ເພື່ອຕິດໃສ່ສະຫຼາກສິນຄ້າ ທີ່ໄດ້ຮັບການຈົດທະບຽນຖິ່ນກຳເນີດ.

**ມາດຕາ 24 ການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ**

ສະມາຊິກເຈົ້າຂອງຖິ່ນກຳເນີດ ທີ່ມີຈຸດປະສົງນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 22 ຂອງຂໍ້ຕົກລົງສະບັບນີ້ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ເຖິງເຈົ້າຂອງຖິ່ນກຳເນີດ. ເຈົ້າຂອງຖິ່ນກຳເນີດ ຕ້ອງອອກໃບອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ໃຫ້ສະມາຊິກຂອງຕົນ.

ສະມາຊິກທີ່ໄດ້ຮັບອະນຸຍາດ ໃຫ້ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຕ້ອງຕິດກາໝາຍຖິ່ນກຳເນີດແຫ່ງຊາດ ໃສ່ສະຫຼາກສິນຄ້າຂອງຕົນ. ນອກນັ້ນ, ຄຳວ່າ 'ຖິ່ນກຳເນີດທີ່ໄດ້ຮັບການປົກປ້ອງ' ຫຼື ຂຽນເປັນຕົວຫຍໍ້ເປັນອັກສອນລາແຕັງ 'PGI' ກໍ່ສາມາດຕິດໃສ່ສະຫຼາກໄດ້.

**ມາດຕາ 25 ການຄຸ້ມຄອງກາໝາຍຖິ່ນກຳເນີດແຫ່ງຊາດ**

ກົມຊັບສິນທາງປັນຍາ ຕ້ອງຄຸ້ມຄອງບັນຊີລາຍຊື່ຂອງເຈົ້າຂອງຖິ່ນກຳເນີດ ທີ່ໄດ້ຮັບໃບຢັ້ງຢືນນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ເພື່ອເປັນຂໍ້ມູນໃຫ້ແກ່ບຸກຄົນທີ່ສົນໃຈ.

ກົມຊັບສິນທາງປັນຍາ ມີສິດຮຽກເຈົ້າຂອງຖິ່ນກຳເນີດມາຊີ້ແຈງ ຫຼື ສະໜອງຂໍ້ມູນ ຫຼື ເອກະສານ ຫຼື

ຫຼັກຖານອື່ນໆ ທີ່ຈຳເປັນໃນກໍລະນີສະມາຊິກທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຈາກເຈົ້າຂອງຖິ່ນກຳເນີດຫາກບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້. ກົມຊັບສິນທາງປັນຍາ ມີສິດນຳໃຊ້ມາດຕະການທາງດ້ານບໍລິຫານຕໍ່ເຈົ້າຂອງຖິ່ນກຳເນີດ ເຊັ່ນ:

1. ຍົກເລີກໃບຢັ້ງຢືນນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຂອງເຈົ້າຂອງຖິ່ນກຳເນີດ ແລະ ເຈົ້າຂອງຖິ່ນກຳເນີດຕ້ອງຢຸດເຊົາການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ;
2. ຍົກເລີກການຈົດທະບຽນຖິ່ນກຳເນີດ ແລະ ຈະຖືວ່າໃບຢັ້ງຢືນນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ກໍ່ຖືກຍົກເລີກເຊັ່ນດຽວກັນ.

**ມາດຕາ 26 ອາຍຸການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ**

ໃບຢັ້ງຢືນນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ມີອາຍຸຕະຫຼອດໄລຍະເວລາ ທີ່ເຈົ້າຂອງຖິ່ນກຳເນີດປະຕິບັດຕາມເງື່ອນໄຂ ທີ່ໄດ້ລະບຸໄວ້ໃນເອກະສານກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ພາຍໃຕ້ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງຍົກເລີກໃບຢັ້ງຢືນນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຫາກເຈົ້າຂອງຖິ່ນກຳເນີດ ບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວ.

## ໝວດທີ 5
## ສິດ ແລະ ໜ້າທີ່ເຈົ້າຂອງຖິ່ນກຳເນີດ ແລະ ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ

**ມາດຕາ 27 ສິດ ແລະ ໜ້າທີ່ຂອງເຈົ້າຂອງຖິ່ນກຳເນີດ**

ເຈົ້າຂອງຖິ່ນກຳເນີດ ເປັນຜູ້ຕາງໜ້າໃນການປົກປ້ອງສິດ ແລະ ຜົນປະໂຫຍດໃຫ້ແກ່ສະມາຊິກຂອງຕົນ ຊຶ່ງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບປະກັນຕໍ່ຄຸນນະພາບ, ຊື່ສຽງ ແລະ ຄວາມດັ້ງເດີມຂອງສິນຄ້າຖິ່ນກຳເນີດຂອງຕົນ ທີ່ຖືກຍອມຮັບຈາກຕະຫຼາດ ດ້ວຍການຕິດຕາມການນຳໃຊ້ຊື່ຂອງສິນຄ້າຖິ່ນກຳເນີດ ໃນທາງການຄ້າ ແລະ ໃນກໍລະນີເກີດມີຂໍ້ຜິດພາດໃດໜຶ່ງຕ້ອງແຈ້ງໃຫ້ກົມຊາບ;
2. ຮັບປະກັນໃຫ້ສິນຄ້າຖິ່ນກຳເນີດ ຂອງຕົນໄດ້ຮັບການປົກປ້ອງຕາມກົດໝາຍ;
3. ສ້າງຂໍ້ມູນ ແລະ ກິດຈະກຳການໂຄສະນາໂດຍມີເປົ້າໝາຍເພື່ອສື່ສານ ແລະ ປະຊາສຳພັນໃຫ້ຜູ້ບໍລິໂພກຮັບຮູ້ເຖິງຄຸນລັກສະນະພິເສດ ຂອງສິນຄ້າຖິ່ນກຳເນີດ ຊຶ່ງເປັນການເພີ່ມມູນຄ່າໃຫ້ແກ່ສິນຄ້າດັ່ງກ່າວ;
4. ຄຸ້ມຄອງ, ຕິດຕາມ, ກວດກາສິນຄ້າຖິ່ນກຳເນີດ ເພື່ອໃຫ້ມີຄວາມສອດຄ່ອງຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ໃນເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ;
5. ປັບປຸງການດຳເນີນງານຂອງເຈົ້າຂອງຖິ່ນກຳເນີດ ລວມທັງ ການພັດທະນາຄວາມຊຳນານງານ ແລະ ວາງແຜນຍຸດທະສາດທາງການຄ້າ, ວິເຄາະ, ເຜີຍແຜ່ຂໍ້ມູນດ້ານເສດຖະກິດ ຂອງສິນຄ້າຖິ່ນກຳເນີດດັ່ງກ່າວ ແລະ ໃຫ້ຄຳແນະນຳແກ່ສະມາຊິກຂອງຕົນ;
6. ພັດທະນາສິນຄ້າເພື່ອເພີ່ມມູນຄ່າໂດຍນຳໃຊ້ມາດຕະການປົກປ້ອງ ຫຼື ຕອບໂຕ້ຕໍ່ມາດຕະການທີ່ເກີດມີຄວາມສ່ຽງ ຫຼື ສ້າງຄວາມເສຍຫາຍຕໍ່ພາບພົດຂອງສິນຄ້າ;
7. ມີສ່ວນຮ່ວມໃນການປົກປ້ອງຊື່ຂອງສິນຄ້າຖິ່ນກຳເນີດ ການອານຸລັກຮັກສາຄວາມສົມດຸນຂອງລະບົບນິເວດ ແລະ ຄຸນຄ່າຂອງສິນຄ້າຖິ່ນກຳເນີດ ລວມທັງການເກັບກຳຂໍ້ມູນ ແລະ ສະຖິຕິກ່ຽວກັບຕ່ອງໂສ້ມູນຄ່າຂອງສິນຄ້າດັ່ງກ່າວ;
8. ດຳເນີນມາດຕະການຕໍ່ສະມາຊິກ ທີ່ບໍ່ປະຕິບັດຕາມເອກະສານ ກ່ຽວກັບຄຸນລັກສະນະສິນຄ້າ

ຖິ່ນກຳເນີດ ອີງຕາມການລາຍງານຂອງໜ່ວຍງານກວດສອບຖິ່ນກຳເນີດ ໃນມາດຕາ 28 ຂອງຂໍ້ຕົກລົງສະບັບນີ້ ດັ່ງນີ້:

1. ໃຫ້ຄຳແນະນຳ;
2. ກ່າວຕັກເຕືອນ;
3. ຍົກເລີກສິດນຳໃຊ້ຖິ່ນກຳເນີດຕໍ່ຜະລິດຕະພັນໃນງວດນັ້ນ;

9. ລາຍງານຜົນການດຳເນີນມາດຕະການ ໃນຂໍ້ 8 ຂອງມາດຕານີ້ ໃຫ້ກົມຊັບສິນທາງປັນຍາຮັບຊາບ.
10. ລາຍງານຫາກົມຊັບສິນທາງປັນຍາ ໃນກໍລະນີພົບເຫັນ ການລະເມີດລະບຽບການທີ່ກ່ຽວຂ້ອງກັບຖິ່ນກຳເນີດ ຂອງສະມາຊິກ ຫຼື ບຸກຄົນທີ 3.

**ມາດຕາ 28 ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ**

ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ ແມ່ນໜ່ວຍງານທີ່ຢັ້ງຢືນວ່າ ຜູ້ດຳເນີນການໄດ້ປະຕິບັດຕາມເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ທີ່ເຈົ້າຂອງຖິ່ນກຳເນີດໄດ້ກຳນົດ, ໜ່ວຍງານດັ່ງກ່າວ ເປັນໜ່ວຍງານທີ່ໄດ້ຮັບການອະນຸຍາດໃນການປະຕິບັດວຽກງານກວດສອບ ຫຼື ຢັ້ງຢືນໃນ ສປປ ລາວ ຫຼື ຕ່າງປະເທດ ຊຶ່ງອາດເປັນໜ່ວຍງານຂອງລັດ ຫຼື ເອກະຊົນທີ່ມີຄວາມຮັບຜິດຊອບ ແລະ ເປັນກາງໂດຍມີລະບົບກວດສອບທີ່ເຊື່ອຖືໄດ້. ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດມີສິດເລືອກໜ່ວຍງານກວດສອບຄຸນລັກສະນະຖິ່ນກຳເນີດຕາມຄວາມເໝາະສົມ.

ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດຕ້ອງຢັ້ງຢືນວ່າ ການຜະລິດສິນຄ້າສອດຄ່ອງກັບເງື່ອນໄຂຕ່າງໆ ທີ່ໄດ້ລະບຸໄວ້ໃນເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຂອງຖິ່ນກຳເນີດ.

ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ ຕ້ອງສົ່ງບົດລາຍງານຜົນການກວດສອບແຕ່ລະຄັ້ງໃຫ້ເຈົ້າຂອງຖິ່ນກຳເນີດ ແລະ ກົມຊັບສິນທາງປັນຍາ ໂດຍອີງຕາມລະດູການຜະລິດ ຫຼື ໃນຕອນທ້າຍຂອງປີປະຕິທິນ. ບົດລາຍງານໃດທີ່ບໍ່ເປັນພາສາລາວ ຕ້ອງແປເປັນພາສາລາວ ພ້ອມທັງມີການຢັ້ງຢືນຄວາມຖືກຕ້ອງຂອງການແປ.

ໃນກໍລະນີຜູ້ດຳເນີນການບໍ່ປະຕິບັດຕາມເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ໜ່ວຍງານກວດສອບຄຸນລັກສະນະສິນຄ້າຖິ່ນກຳເນີດ ຕ້ອງລາຍງານກ່ຽວກັບການລະເມີດດັ່ງກ່າວ ຫາເຈົ້າຂອງຖິ່ນກຳເນີດ ແລະ ລາຍງານໃຫ້ກົມຊັບສິນທາງປັນຍາຊາບ.

ກົມຊັບສິນທາງປັນຍາ ສາມາດເຊີນຜູ້ທີ່ເປັນເຈົ້າຂອງຖິ່ນກຳເນີດ ຫຼື ບຸກຄົນທີ່ກ່ຽວຂ້ອງມາໃຫ້ຄຳອະທິບາຍ ຫຼື ເອົາຫຼັກຖານທີ່ຊີ້ໃຫ້ເຫັນວ່າ ຜູ້ດຳເນີນການບໍ່ໄດ້ປະຕິບັດຕາມເອກະສານ ກ່ຽວກັບຄຸນລັກສະນະສິນຄ້າຖິ່ນກຳເນີດ ຫຼື ໃນກໍລະນີຈຳເປັນ, ກົມຊັບສິນທາງປັນຍາ ສາມາດຂໍຄຳແນະນຳຈາກຜູ້ຊ່ຽວຊານທີ່ກ່ຽວຂ້ອງເພື່ອເປັນຂໍ້ມູນໃນການພິຈາລະນາ ແລະ ຕັດສິນບັນຫາດັ່ງກ່າວ.

## ໝວດທີ 6
## ການເປັນຜູ້ຕາງໜ້າໃນການຈົດທະບຽນຖິ່ນກຳເນີດ ແລະ ດຳເນີນການອື່ນ

**ມາດຕາ 29 ບຸກຄົນທີ່ມີສິດເປັນຜູ້ຕາງໜ້າໃນການຈົດທະບຽນຖິ່ນກຳເນີດ ແລະ ດຳເນີນການອື່ນ**

ບຸກຄົນທີ່ມີສິດຕາງໜ້າໃຫ້ແກ່ຜູ້ທີ່ມີສິດໄດ້ຮັບການປົກປ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ເພື່ອດຳເນີນການຈົດທະບຽນ ແລະ ດຳເນີນການອື່ນ ມີດັ່ງນີ້:

1. ທະນາຍຄວາມທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນການທາງດ້ານກົດໝາຍໃນ ສປປ ລາວ;
2. ຜູ້ປະກອບການທາງດ້ານຊັບສິນທາງປັນຍາ;
3. ຜູ້ຕາງໜ້າ ຫຼື ພະນັກງານຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
4. ບຸກຄົນທົ່ວໄປທີ່ຜູ້ຮ້ອງຂໍຈົດທະບຽນວ່າຈ້າງ.

ສໍາລັບຜູ້ຮ້ອງຂໍຈົດທະບຽນຖິ່ນກໍາເນີດຈາກຕ່າງປະເທດ ຕ້ອງຍື່ນຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດ ຜ່ານຜູ້ປະກອບການທາງດ້ານຊັບສິນທາງປັນຍາ ຫຼື ທະນາຍຄວາມ ທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນການທາງດ້ານກົດໝາຍ ໃນ ສປປ ລາວ ເທົ່ານັ້ນ.

ບຸກຄົນທີ່ມີສິດເປັນຜູ້ຕາງໜ້າ ຕ້ອງມີຄວາມຮູ້ດ້ານຊັບສິນທາງປັນຍາ ແລະ ມີທີ່ຢູ່ ຢູ່ ສປປ ລາວ ແລະ ຕ້ອງໄດ້ຮັບອະນຸຍາດ ຈາກກົມຊັບສິນທາງປັນຍາ.

**ມາດຕາ 30 ການແຕ່ງຕັ້ງຜູ້ຕາງໜ້າ**

ຜູ້ຕາງໜ້າ ຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງ ຕາມໃບມອບສິດທີ່ມີລາຍເຊັນຂອງຜູ້ຮ້ອງຂໍຈົດທະບຽນຖິ່ນກໍາເນີດ ຫຼື ຜູ້ມອບສິດ.

ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 31 ຂອງຂໍ້ຕົກລົງສະບັບນີ້ ແລະ ການກໍານົດອື່ນໃນໝວດນີ້, ຜູ້ຮ້ອງຂໍຈົດທະບຽນຖິ່ນກໍາເນີດສາມາດແຕ່ງຕັ້ງຜູ້ຕາງໜ້າໄດ້ຫຼາຍຄົນ ໂດຍທີ່ຜູ້ຕາງໜ້າທັງໝົດດັ່ງກ່າວ ມີທີ່ຢູ່ບ່ອນດຽວກັນ.

**ມາດຕາ 31 ການມອບສິດ**

ການມອບສິດ ໝາຍເຖິງ ໃບມອບສິດທີ່ເຈົ້າຂອງສິດໄດ້ມອບໝາຍໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ.

ໃບມອບສິດ ຕ້ອງກໍານົດ:

1. ເງື່ອນໄຂ ແລະ ຂອບເຂດຂອງການເປັນຜູ້ຕາງໜ້າ;
2. ສິດທີ່ຖືກມອບໝາຍໃນການດໍາເນີນການໃດໜຶ່ງທີ່ກ່ຽວຂ້ອງນໍາກົມຊັບສິນທາງປັນຍາ;
3. ໄລຍະເວລາ (ຖ້າມີ);
4. ຜູ້ມອບສິດສາມາດຍົກເລີກໄດ້ທຸກເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ສິດຂອງຜູ້ຕາງໜ້າໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນໃນລະຫວ່າງການຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ໄດ້ກໍານົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດ ຫາກຂັດກັບກົດໝາຍ ຫຼື ຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາຕ້ອງຖືວ່າ ໃບມອບສິດນໍາໃຊ້ສະເພາະຄໍາຮ້ອງດຽວເທົ່ານັ້ນ ຖ້າໃບມອບສິດຫາກບໍ່ໄດ້ກໍານົດເງື່ອນໄຂ, ຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດໍາເນີນການອື່ນ ທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ ແລະ ອາຍຸຂອງໃບມອບສິດຈະຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄໍາຮ້ອງດັ່ງກ່າວ ຫຼື ການດໍາເນີນການອື່ນຫາກສໍາເລັດແລ້ວ.

ການມອບສິດທີ່ມີຜົນບັງຄັບໃຊ້ຕ້ອງເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ມອບສິດ. ໃນກໍລະນີຜູ້ອອກໃບມອບສິດເປັນນິຕິບຸກຄົນ ຫຼື ການຈັດຕັ້ງ, ໃບມອບສິດຕ້ອງໄດ້ລົງລາຍເຊັນໂດຍຜູ້ມີສິດອໍານາດຂອງນິຕິບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ.

**ມາດຕາ 32 ການສິ້ນສຸດການເປັນຜູ້ຕາງໜ້າ**

ການເປັນຜູ້ຕາງໜ້າ ຈະສິ້ນສຸດລົງໃນກໍລະນີການມອບສິດຖືກຍົກເລີກໂດຍຜູ້ມອບສິດ ຫຼື ຜູ້ຕາງໜ້າຖອນຕົວ. ໃນກໍລະນີ ຜູ້ຕາງໜ້າໄດ້ຖອນຕົວ ຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາ ແລະ ຜູ້ມອບສິດຮັບຊາບ.

# ໝວດທີ 7
# ການທົບທວນຄືນ ແລະ ການແກ້ໄຂຂໍ້ຂັດແຍ່ງ ທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຖິ່ນກຳເນີດ

**ມາດຕາ 33 ການທົບທວນຄືນ ແລະ ການແກ້ໄຂຂໍ້ຜິດພາດ**

ກົມຊັບສິນທາງປັນຍາ ມີສິດທົບທວນຄືນການຈົດທະບຽນຖິ່ນກຳເນີດ ໂດຍດຳເນີນການທາງດ້ານບໍລິຫານຕາມຄວາມຈຳເປັນ ເພື່ອການປ້ອງກັນ ແລະ ແກ້ໄຂຂໍ້ຜິດພາດ.

**ມາດຕາ 34 ການທົບທວນຄືນດ້ານບໍລິຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດສະເໜີໃຫ້ກົມຊັບສິນທາງປັນຍາ ທົບທວນຄືນພາຍໃນເວລາ 90 ວັນ ພາຍຫຼັງວັນທີ່ອອກແຈ້ງການຂອງກົມ ກ່ຽວກັບການດຳເນີນການຈົດທະບຽນຖິ່ນກຳເນີດຂອງຕົນທີ່ມີຂໍ້ຜິດພາດ ຫຼື ບໍ່ປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ ແລະ ຂໍ້ຕົກລົງສະບັບນີ້ ຕາມແຕ່ກໍລະນີດັ່ງນີ້:

1. ສະເໜີຂໍດັດແກ້ຂໍ້ຜິດພາດທີ່ເກີດຈາກກົມຊັບສິນທາງປັນຍາ ໂດຍບໍ່ຈ່າຍຄ່າບໍລິການ;
2. ສະເໜີຂໍດັດແກ້ຂໍ້ຜິດພາດທີ່ເກີດຈາກຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ໂດຍຈ່າຍຄ່າບໍລິການ;
3. ສະເໜີຂໍໃຫ້ພິຈາລະນາຄືນໃໝ່ ຊຶ່ງຕ້ອງປະກອບມີຂໍ້ມູນດັ່ງນີ້:
   - 3.1 ເງື່ອນໄຂ ຫຼື ການຕົກລົງ ທີ່ຕ້ອງການໃຫ້ທົບທວນຄືນ;
   - 3.2 ຂໍ້ເທັດຈິງ ແລະ ພື້ນຖານທາງດ້ານກົດໝາຍ;
   - 3.3 ມາດຕະການທີ່ສະເໜີໃຫ້ກົມຊັບສິນທາງປັນຍາພິຈາລະນາ.

ການສະເໜີຍັງອາດຈະລວມເອົາຄຳຊີ້ແຈງ ຫຼື ການອະທິບາຍຊຶ່ງຜູ້ສະເໜີເຫັນວ່າຈະເປັນການສະໜັບສະໜູນໃຫ້ແກ່ການ ພິຈາລະນາຄືນໃໝ່ ຫຼື ສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໂດຍບໍ່ຈ່າຍຄ່າບໍລິການ.

**ມາດຕາ 35 ການສະເໜີໃຫ້ຢຸດຊົ່ວຄາວ**

ການສະເໜີໃຫ້ທົບທວນທາງດ້ານບໍລິຫານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງຂໍ້ຕົກລົງສະບັບນີ້ອາດລວມເຖິງການສະເໜີໃຫ້ຢຸດຊົ່ວຄາວ ການປະຕິບັດຜົນການພິຈາລະນາ ຂອງກົມຊັບສິນທາງປັນຍາ ທີ່ຜູ້ສະ ເໜີຂໍໃຫ້ພິຈາລະນາຄືນໃໝ່ ຫຼື ສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ເພື່ອຄວາມຍຸຕິທຳ ໂດຍຄຳນຶງເຖິງຜົນປະໂຫຍດຂອງບຸກຄົນທີສາມ.

**ມາດຕາ 36 ການພິຈາລະນາຄືນໃໝ່**

ກົມຊັບສິນທາງປັນຍາ ຕ້ອງຮັບການສະເໜີທີ່ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຈົດທະບຽນຖິ່ນກຳເນີດ ຊຶ່ງຜູ້ສະເໜີຕ້ອງມີເຫດຜົນທີ່ພຽງພໍໃນການສະເໜີໃຫ້ທົບທວນຜົນການພິຈາລະນາ ທີ່ຕົນເຫັນວ່າບໍ່ສອດ ຄ່ອງຕາມຂໍ້ຕົກລົງສະບັບນີ້.

ໃນກໍລະນີ ຜູ້ສະເໜີບໍ່ພໍໃຈຕໍ່ຜົນການພິຈາລະນາຄືນໃໝ່ ສາມາດສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໄປຍັງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຂອງກົມຊັບສິນທາງປັນຍາ ພາຍໃນ 30 ວັນນັບແຕ່ວັນອອກແຈ້ງການຂອງກົມຊັບສິນທາງປັນຍາ ກ່ຽວກັບຜົນການພິຈາລະນາດັ່ງກ່າວເປັນຕົ້ນໄປ ແລະ ຖ້າຜູ້ສະເໜີບໍ່ປະຕິບັດພາຍໃນໄລຍະເວລາດັ່ງກ່າວ ຖືວ່າຜູ້ກ່ຽວສະຫຼະສິດ.

**ມາດຕາ 37 ຂັ້ນຕອນການພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການຢູ່ນຳກົມຊັບສິນທາງປັນຍາ ກ່ຽວກັບການຈົດທະບຽນຖິ່ນກຳເນີດ ມີສິດສະເໜີພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ໄປຍັງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ເພື່ອພິຈາລະນາ ໂດຍຈ່າຍຄ່າບໍລິການ.

ພະນັກງານວິຊາການຂອງກົມຊັບສິນທາງປັນຍາ ທີ່ມີສ່ວນຮ່ວມໃນ ການອະນຸຍາດ, ການຢັ້ງຢືນ, ການປະຕິເສດ ຫຼື ການພິຈາລະນາ ທີ່ກໍ່ໃຫ້ເກີດມີການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ຕ້ອງໃຫ້ຄຳຊີ້ແຈງກ່ຽວກັບຫຼັກການທາງດ້ານກົດໝາຍ ແລະ ຂໍ້ເທັດຈິງກ່ຽວກັບການຜົນການພິຈາລະນາດັ່ງກ່າວ ເພື່ອເປັນຂໍ້ມູນໃຫ້ແກ່ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ.

ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ສາມາດເຊີນຜູ້ຊ່ຽວຊານສະເພາະດ້ານມາໃຫ້ຄຳປຶກສາ. ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຕ້ອງດຳເນີນການພິຈາລະນາ ຕາມມາດຕານີ້ ແລະ ຕ້ອງບັນທຶກການຕົກລົງເປັນລາຍລັກອັກສອນ ຂອງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ໂດຍລະບຸຫຼັກການທາງດ້ານກົດໝາຍ ແລະ ຂໍ້ເທັດຈິງທີ່ກ່ຽວຂ້ອງ. ບົດບັນທຶກການຕົກລົງດັ່ງກ່າວ ຕ້ອງສົ່ງໃຫ້ຜູ້ສະເໜີຂໍໃຫ້ພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ເພື່ອຮັບຊາບ.

ການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານດັ່ງກ່າວ ຖືວ່າເປັນໂມຄະໃນກໍລະນີທີ່ຜູ້ສະເໜີບໍ່ສາມາດສະໜອງຂໍ້ມູນທີ່ຈຳເປັນ ຕາມທີ່ກຳນົດໄວ້ໃນຂໍ້ 3 ມາດຕາ 34 ຂອງຂໍ້ຕົກລົງສະບັບນີ້.

ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຕ້ອງສົ່ງສຳນວນຄຳສະເໜີ ຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ພ້ອມດ້ວຍບົດບັນທຶກການຕົກລົງຂອງຕົນ ໃຫ້ກົມຊັບສິນທາງປັນຍາອອກແຈ້ງການ ກ່ຽວກັບຜົນຂອງການຕົກລົງຂອງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ໃຫ້ຄູ່ສະເໜີຊາບ ຊຶ່ງຖືວ່າເປັນການສິ້ນສຸດການພິຈາລະນາທາງດ້ານບໍລິຫານ.

**ມາດຕາ 38 ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ**

ກົມຊັບສິນທາງປັນຍາ ຕ້ອງສ້າງຕັ້ງຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ເພື່ອດຳເນີນການພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ກ່ຽວກັບການຢັ້ງຢືນ, ການປະຕິເສດ ຫຼື ຜົນການພິຈາລະນາ ກ່ຽວກັບຂັ້ນຕອນການຈົດທະບຽນຖິ່ນກຳເນີດ.

ຄະນະກຳມະການພິຈາລະນາຂັ້ນສຸດທ້າຍ ຕ້ອງເປັນເອກະລາດ ແລະ ບໍ່ຂຶ້ນກັບພະແນກໃດພາຍໃນກົມຊັບສິນທາງປັນຍາ ຊຶ່ງສາມາດສ້າງຕັ້ງຂຶ້ນແບບຖາວອນ ຫຼື ຊົ່ວຄາວກໍໄດ້.

ບຸກຄົນທີ່ມີສ່ວນຮ່ວມໃນການຢັ້ງຢືນ, ການປະຕິເສດ ຫຼື ການກຳນົດເງື່ອນໄຂ ຫຼື ການຕົກລົງ ທີ່ກໍ່ໃຫ້ເກີດເປັນສາເຫດຂອງການສະເໜີຂໍພິຈາລະນາຂັ້ນສຸດທ້າຍທາງດ້ານບໍລິຫານ ບໍ່ສາມາດເຂົ້າຮ່ວມຢູ່ໃນຄະນະກຳມະການພິຈາລະນາຂັ້ນສຸດທ້າຍ.

## ໝວດທີ 8
## ການສ້າງສຳນວນເອກະສານຂຶ້ນໃໝ່

**ມາດຕາ 39 ສຳນວນເອກະສານເສຍຫາຍ ຫຼື ຊອກບໍ່ເຫັນ**

ໃນກໍລະນີ ສຳນວນເອກະສານ ຫຼື ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຈົດທະບຽນຖິ່ນກຳເນີດຫາກເກີດມີການເສຍຫາຍ ຫຼື ຊອກບໍ່ເຫັນ ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານດັ່ງກ່າວຂຶ້ນມາ ໃໝ່.

**ມາດຕາ 40 ການສ້າງສຳນວນເອກະສານຂຶ້ນໃໝ່**

ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານ ຫຼື ເອກະສານອື່ນໆ ທີ່ເສຍຫາຍ ຫຼື ຊອກບໍ່ເຫັນນັ້ນຂຶ້ນໃໝ່ ຖ້າສຳນວນເອກະສານ ຫຼື ເອກະສານອື່ນໆ ທີ່ພົວພັນເຖິງຄຳຮ້ອງ ຫຼື ການດຳເນີນການອື່ນໆຫາກ

ເສຍຫາຍ ຫຼື ຊອກບໍ່ເຫັນ. ກົມຊັບສິນທາງປັນຍາ ຕ້ອງສະເໜີໃຫ້ຜູ້ຍື່ນຄໍາຮ້ອງ ຫຼື ເຈົ້າຂອງສໍານວນເອກະສານ ສົ່ງສໍາເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ພ້ອມທັງຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງສໍາເນົາດັ່ງກ່າວ ລວມທັງເອກະສານ ຫຼື ສໍານວນເອກະສານທີ່ກ່ຽວຂ້ອງ ທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ທີ່ບໍ່ມີການບັນທຶກໄວ້ ແຕ່ຜູ້ຮ້ອງຂໍຈົດທະບຽນຖິ່ນກໍາເນີດ ຫຼື ເຈົ້າຂອງສໍານວນເອກະສານນັ້ນໄດ້ຮັບຮູ້.

## ໝວດທີ 9
## ອົງການຄຸ້ມຄອງວຽກງານຖິ່ນກໍາເນີດ

### ມາດຕາ 41 ອົງການຄຸ້ມຄອງ

ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຜູ້ຮັບຜິດຊອບພິຈາລະນາຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດ ແລະ ອອກໃບຢັ້ງຢືນການຈົດທະບຽນຖິ່ນກໍາເນີດ ຕາມເງື່ອນໄຂທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ເປັນຜູ້ຮັບຜິດຊອບໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ເຈົ້າຂອງຖິ່ນກໍາເນີດ; ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງກົມຊັບສິນທາງປັນຍາ.

ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ, ນະຄອນ ແມ່ນປະຕິບັດຕາມການມອບໝາຍ ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ.

### ມາດຕາ 42 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ

ກົມຊັບສິນທາງປັນຍາມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ຂໍ້ຕົກລົງ, ອອກຄໍາແນະນໍາ, ແຈ້ງການ ກ່ຽວກັບຖິ່ນກໍາເນີດ;
2. ຄົ້ນຄ້ວາ ແລະ ນໍາສະເໜີ ກະຊວງເພື່ອອອກນິຕິກໍາ ແລະ ລະບຽບການຕ່າງໆ ໃນການຄຸ້ມຄອງ ແລະ ປົກປ້ອງຖິ່ນກໍາເນີດ;
3. ຮັບ ແລະ ພິຈາລະນາສໍານວນຄໍາຮ້ອງຂໍຈົດທະບຽນ, ການບັນທຶກການປ່ຽນແປງ ຊື່, ທີ່ຢູ່ ແລະ ຊື່ ແລະ ທີ່ຢູ່;
4. ການອະນຸຍາດນໍາໃຊ້ ແລະ ການສະເໜີອື່ນໆ ກ່ຽວກັບຖິ່ນກໍາເນີດ;
5. ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບ ຖິ່ນກໍາເນີດ;
6. ຈົດທະບຽນ, ແຈ້ງປະຕິເສດ, ຍົກເລີກ ຫຼື ລຶບລ້າງ ແລະ ອື່ນໆ ກ່ຽວກັບການຈົດທະບຽນຖິ່ນກໍາເນີດ;
7. ຄົ້ນຄວ້າ ແລະ ພິຈາລະນາຄໍາສະເໜີ ຂໍຄັດຄ້ານຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດ;
8. ໂຈະສິດນໍາໃຊ້ຖິ່ນກໍາເນີດຊົ່ວຄາວ;
9. ຖອນສິດນໍາໃຊ້ຖິ່ນກໍາເນີດຢ່າງຖາວອນ;
10. ຄົ້ນຄວ້າ ແລະ ພິຈາລະນາຄໍາສະເໜີໃຫ້ທົບທວນຄືນທາງດ້ານບໍລິຫານ ທີ່ກ່ຽວຂ້ອງກັບການຈົດທະບຽນຖິ່ນກໍາເນີດ;
11. ຄົ້ນຄວ້າ ແລະ ພິຈາລະນາຄໍາສະເໜີຂໍແກ້ໄຂຂໍ້ຂັດແຍ່ງຖິ່ນກໍາເນີດທາງດ້ານບໍລິຫານ ກ່ຽວກັບການຈົດທະບຽນຖິ່ນກໍາເນີດ;
12. ຊຸກຍູ້ ແລະ ສົ່ງເສີມ ວຽກງານການຈົດທະບຽນຖິ່ນກໍາເນີດ;
13. ຄຸ້ມຄອງເຈົ້າຂອງຖິ່ນກໍາເນີດ;
14. ຄຸ້ມຄອງກາໝາຍຖິ່ນກໍາເນີດແຫ່ງຊາດ;
15. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ**

ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້ສິ່ງເສີມເຈົ້າຂອງຖິ່ນກໍາເນີດ;
2. ປະສານງານກັບພະແນກການທີ່ກ່ຽວຂ້ອງ;
3. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍ ຂອງກົມຊັບສິນທາງປັນຍາ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 44 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊັບສິນທາງປັນຍາ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີແຂວງ, ນະຄອນຫຼວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 45 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດເມື່ອໄດ້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາກ່ຽວກັບຖິ່ນກໍາເນີດ ສະບັບເລກທີ 1119/ກວຕ ລົງວັນທີ 25 ຕຸລາ 2016.

ຂໍ້ກໍານົດ ແລະ ຂໍ້ຕົກລົງ ໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ລັດຖະມົນຕີ**
**ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**

ບໍ່ວຽງຄໍາ ວົງດາລາ